ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 777/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 23 ສິງຫາ 2023

# ຂໍ້ຕົກລົງ
## ວ່າດ້ວຍການປັບປຸງອັດຕາສ່ວນເງິນແຮຝາກບັງຄັບ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 7 ທັນວາ 2018;
- ອີງຕາມບົດບັນທຶກກອງປະຊຸມຄະນະກຳມະການນະໂຍບາຍເງິນຕາ ຄັ້ງວັນທີ 3 ສິງຫາ 2023;
- ອີງຕາມການຕົກລົງເຫັນດີຂອງຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕໍ່ບົດສະເໜີຂອງກົມນະໂຍບາຍເງິນຕາ ສະບັບເລກທີ 157/ກນງ, ລົງວັນທີ 18 ສິງຫາ 2023.

### ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ເພື່ອຮັບປະກັນການບໍລິຫານສະພາບຄ່ອງ ແລະ ຄວາມສ່ຽງຂອງລະບົບທະນາຄານໃຫ້ມີປະສິດທິພາບ ຄວບຄຸມຄຸນນະພາບສິນເຊື່ອໃຫ້ເຂັ້ມແຂງຍືນຍົງ ແລະ ສອດຄ່ອງກັບສະພາບເສດຖະກິດມະຫາພາກໃນປັດຈຸບັນ.

**ມາດຕາ 2 ອັດຕາສ່ວນເງິນແຮຝາກບັງຄັບ**

1. ປັບເພີ່ມອັດຕາສ່ວນເງິນແຮຝາກບັງຄັບສະກຸນເງິນກີບຈາກ 5,5% ມາເປັນ 8%;
2. ປັບເພີ່ມອັດຕາສ່ວນເງິນແຮຝາກບັງຄັບສະກຸນເງິນຕາຕ່າງປະເທດຈາກ 8% ມາເປັນ 10%.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ໃຫ້ທະນາຄານທຸລະກິດທີ່ມີພັນທະຈັດຕັ້ງປະຕິບັດເງິນແຮຝາກບັງຄັບຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ, ກົມນະໂຍບາຍເງິນຕາ, ກົມບໍລິການທະນາຄານ, ກົມບັນຊີ ແລະ ການເງິນ, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບຕັ້ງແຕ່ວັນທີ 31 ສິງຫາ 2023 ເປັນຕົ້ນໄປ: ໃຊ້ປ່ຽນແທນມາດຕາ 2 ຂໍ້ຕົກລົງວ່າດ້ວຍອັດຕາສ່ວນເງິນແຮຝາກບັງຄັບ ສະບັບເລກທີ 113/ທຫລ, ລົງວັນທີ 10 ກຸມພາ 2023.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ບຸນເຫຼືອ ສິນໄຊວໍຣະວົງ